# ຜົນຂອງການສຳຣວດ ແລະການວິຈັຍທາງດ້ານສະຖິຕິ ກ່ຽວກັບການດື່ມເຫຼົ້າ, ສູບຢາ ແລະນຳໃຊ້ຢາເສບຕິດຊນິດອື່ນ ຂອງຊຸມຊົນຊາວລາວໃນຕົວເມືອງມີນີອາໂປລິສ




# The Results of Statistic Survey On Alcohol, Tobacco and Other Drug (ATOD) Use in Lao Community-Minneapolis

## ATOD Program
## 2005-2006

**ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ**
Lao Advancement Organization of America

Lao Cultural Center Building. 2648 West Broadway Avenue. Minneapolis, MN 55411
Tel: 612.302.9048 | Fax: 612.522.2431 | E-mail: laoamerica@laoamerica.org | www.laoamerica.org

## ຜົນສຳເຣັດຂອງການສຳຣວດ ແລະການວິຈັຍທາງດ້ານສຖິຕິ ກ່ຽວກັບການດື່ມເຫຼົ້າ, ສູບຢາ ແລະການນຳໃຊ້ຢາເສບຕິດຊນິດອື່ນ ພາຍໃນປະຊາຄົມລາວ ທີ່ເມືອງມິນີອາໂປລິສ ປີ 2005-2006

ໂດຽໄດ້ຮັບທຶນຊ່ວຍເຫຼືອຈາກພແນກປ້ອງກັນເຊື້ອສານເຄມີມີພິດ, ກະຊວງສັງຄົມສົງເຄາະແຫ່ງຣັຖມິນີໂຊຕາ, ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ ໄດ້ຈັດໃຫ້ມີການສຳຣວດ ແລະວິຈັຍທາງດ້ານສະຖິຕິຂື້ນ ກ່ຽວກັບການດື່ມເຫຼົ້າ, ການສູບຢາ ແລະການນຳໃຊ້ຢາເສບຕິດຊນິດອື່ນໆພາຍໃນປະຊາຄົມລາວທີ່ເມືອງມິນີອາໂປລິສ. ຈາກຕົວຢ່າງປະຕິບັດການ 131 ຄົນ ໃນປີ 2005(ກ່ອນການເຂົ້າຮ່ວມນຳໂຄງການຂອງສະມາຊິກ) ແລະ 149 ຄົນ ໃນປີ 2006 (ລຸນຫຼັງການເຂົ້າຮ່ວມຂອງສະມາຊິກກັບໂຄງການ) ທີ່ມີອາຍຸແຕ່ 12 ປີ ຂື້ນໄປ ຊຶ່ງທັງໝົດສ່ວນຫຼວງຫຼາຍເປັນຊາວເມືອງ ມິນີອາໂປລິສ ທີ່ອາສັຍຢູ່ໃນຊຸມຊົນແອອັດ ແລະຍັງໄດ້ອາສັຍຄວາມຊ່ວຍເຫຼືອທາງດ້ານຕ່າງໆຈາກຣັຖບານ. ຊຸມຊົນຊາວລາວ ເກີນກວ່າເຄິ່ງໜຶ່ງຂອງປະຊາຄົມ ໄດ້ໃຫ້ການຕິດພັນກັບການຝຶກອົບຮົມນຳໂຄງການຕ້ານຢາເສບຕິດມີພິດ ທີ່ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖໄດ້ຈັດຂື້ນໃນຊ່ວງເດືອນກໍຣະກະດາ ຫາເດືອນມິຖຸນາ ປີ 2004 ຜ່ານມານີ້ ດ້ວຍດັສນີແຫ່ງການພົວພັນ (r=+.225***) ທີ່ຢືນຢັນໄດ້ຮອດ 99.9% (1), ໃນປະຈຸບັນ, ຄົນລາວຊຶ່ງກວມເຖິງ 75%(1) ຫາ 94.6% (ຕາຕະລາງ 2) ຂອງຊຸມຊົນ ໄດ້ມີຄວາມເຂົ້າໃຈ ແລະຮັບຮູ້ຕໍ່ການສູບຢາ, ການດື່ມເຫຼົ້າ ແລະການນຳໃຊ້ຢາເສບຕິດຊນິດອື່ນໆ ໄດ້ເປັນປັດຈັຍກໍ່ໃຫ້ເກີດມີບັນຫາຕ່າງໆ ຕໍ່ສຸຂພາບຂອງຄົນລາວ. ຣະດັບຄວາມເຂົ້າໃຈຄິດສເລັ່ຽແຕ່ 87% (1) ເຖິງ 97.3% (ຕາຕະລາງ 1, 16) ໂດຽສະເພາະແລ້ວ ແມ່ນຄົນທີ່ມີອາຍຸ ແຕ່ 12-18 ປີ ແລະ 51 ປີ ຂື້ນໄປທີ່ກວມເອົາ- 89.5% ແລະ 100% ຂອງຊຸມຊົນຕາມລຳດັບ (ຕາຕະລາງ 52). ຣະດັບແຫ່ງຄວາມເຂົ້າໃຈຂອງວັຍອາຍຸດັ່ງກ່າວ ກຳລັງຈະກາຍເປັນແຮງດັນ ແລະຈະເຮັດໃຫ້ຄອບຄົວ ກໍຄືປະຊາຄົມລາວກາຍເປັນເຂດປອດຈາກຢາເສບຕິດຕ່າງໆ (1). ນັ້ນມັນ ສອດຄ່ອງກັບເອກກະສານ (ຜົນສຳເຣັດຂອງການສຳຣວດ ແລະການວິຈັຍ ກ່ຽວກັບ ເອ-ທີ-ໂອ-ດີ ປີ 2004-2005 ຂອງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ) ທີ່ມີເຖິງ 71% (1). ຖ້າທຽບໃສ່ຕົວເລກສຳຣວດ ກ່ອນການເຂົ້າຮ່ວມນຳໂຄງການແລ້ວ, ຄວາມເຂົ້າໃຈກ່ຽວກັບບັນຫາດັ່ງກ່າວໄດ້ເພີ້ມຂື້ນ 9.9% ດ້ວຍດັສນີຢືນຢັນ 95% (ຕາຕະລາງ 89, 90)). ນອກຈາກນັ້ນ 94.0% ຂອງປະຊາຄົມ ໄດ້ມີຄວາມເຂົ້າໃຈວ່າ ການນຳໃຊ້ຢາເສບຕິດຕ່າງໆດັ່ງກ່າວເຫຼົ່ານັ້ນ ເປັນສາຍເຫດອັນນຶ່ງ ທີ່ກໍ່ໃຫ້ເກີດມີການລ່ວງລະເມີດ ແລະເຮັດຜິດຕໍ່ກົດໝາຍຂອງບ້ານເມືອງ . ຣະດັບຄວາມເຂົ້າໃຈໃນກໍຣະນີດັ່ງກ່າວໄດ້ເພີ້ມຈາກ 86.26% (ກ່ອນການເຂົ້າຮ່ວມ ປີ 2005) ມາເປັນ 96.98% (ລຸນຫຼັງການສິ້ນສຸດໂຄງການ ປີ 2006) (1)(ຕາຕະລາງ 1, 3, 91, 92). ຍ້ອນພື້ນຖານຄວາມຮັບຮູ້ທັງໝົດດັ່ງກ່າວມາຂ້າງເທິງນັ້ນ ຈຶ່ງໄດ້ເຮັດໃຫ້ເຂົາເຈົ້າເກີດມີຄວາມເປັນຫ່ວງເປັນໃຍ ຕໍ່ການປະພຶດປະຕິບັດຕົວຂອງສະມາຊິກພາຍໃນຄອບຄົວຂອງຕົນເອງເຖິງ 63% ໃນຊ່ວງໄລຍະກ່ອນການສຳຣວດ (2005)(1) ແລະພາຍຫຼັງທີ່ໄດ້ຮຽນຮູ້ ແລະໄດ້ຜ່ານການຝຶກອົບຮົມແລ້ວ ຄວາມກັງວົນດັ່ງກ່າວໄດ້ລົດລົງ 12.51% ດ້ວຍດັສນທີ່ຢືນຢັນໄດ້ 95% (ຕາຕະລາງ 1, 4, 93, 94) . ຄົນລາວໄດ້ເວົ້າລົມ ຫຼືບອກກ່າວຕໍ່ສະມາຊິກໃນຄອບຄົວຂອງຕົນເອງ ກ່ຽວກັບຜົນສະທ້ອນທີ່ອາດເປັນອັນຕະຣາຍ ໃຫ້ແກ່ສຸຂພາບຂອງຕົນເອງ ໃນເມື່ອຫາກໄດ້ນຳໃຊ້ເຊື້ອສານເຄມີ ມີພິດດັ່ງກ່າວເຫຼົ່ານັ້ນ ກໍໄດ້ເພີ້ມຂື້ນຈາກ 66.03% ເຖິງ 91.28% (ຕາຕະລາງ 1,5, 6, 95, 96, 97, 98), ໂດຽສະເພາະແລ້ວ ແມ່ນຜູ້ທີ່ໜຸ່ມນ້ອຍ ທີ່ມີອາຍຸແຕ່ 12 ຫາ 18 ປີ ແລະຜູ້ເຖົ້າທີ່ມີອາຍຸ ແຕ່ 51 ປີ ຂື້ນໄປ ປະມານ 70.17% ຫາ 84.26% ຕາມລຳດັບ (ຕາຕະລາງ 61, 62, 63, 64). ການເວົ້າລົມ ກໍຄືການໃຫ້ຂໍ້ມູນຂ່າວສານ ໄດ້ເພີ້ມຂື້ນ ແລະຢືນຢັນໄດ້ທາງດ້ານສະຖິຕິ 95% ຈາກ 19.26% ເຖິງ 25.25% ບໍ່ວ່າ ຈະເປັນການໂອ້ລົມກັບສະມາຊິກຂອງຄອບຄົວຂອງຕົນ

(1) ຜົນສຳເຣັດຂອງການສຳຣວດ ແລະການວິຈັຍທາງດ້ານສຖິຕິ ກ່ຽວກັບການດື່ມເຫຼົ້າ, ສູບຢາ ແລະນຳໃຊ້ຢາເສບຕິດຊນິດອື່ນ ພາຍໃນປະຊາຄົມລາວ (ການສຳຣວດກ່ອນການເຂົ້າຮ່ວມນຳໂຄງການ ປີ 2005)

ເອງ ກໍຄືການໃຫ້ຂໍ້ມູນຕໍ່ບັນດາໝູ່ເພື່ອນ ແລະຕໍ່ສັງຄົມ ຖ້າທຽບໃສ່ອັດຕຣາການ ໂອ້ລົມກ່ອນການເຂົ້າຮ່ວມນຳໂຄງການ. ແຕ່ຍ້ອນຄວາມໃກ້ຊິດ ແລະການໃຊ້ເວລາທີ່ຕິດພັນໄດ້ຫຼາຍກ່ວາ, ການ ໂອ້ລົມຕໍ່ສະມາຊິກທີ່ຢູ່ໃນພາຍໃນຄອບຄົວຂອງຕົນເອງ ຈຶ່ງມີຄວາມໝາຍຫຼາຍກ່ວາ 5.99% ດ້ວຍຄວາມແຕກຕ່າງທີ່ຢືນຢັນໄດ້ຮອດ 95%.(1)(ຕາຕະລາງ 1, 5, 6, 95, 96, 97, 98)

ໃນປະຈຸບັນຄົນລາວດື່ມເຫຼົ້າ ມີພຽງແຕ່ 12% (ຕາຕະລາງ 1, 7) ຫາ , 21%(1). ຖ້າທຽບໃສ່ກ່ອນໜ້ານັ້ນ ມີໜ້ອຍກ່ວາ 8% (1)(ຕາຕະລາງ 99, 100) . ຜູ້ຊາຍດື່ມເຫຼົ້າຫຼາຍກ່ວາຜູ້ຍິງ 3 ເທົ່າຕົວ(1) ຫຼື 1.52 ເທົ່າຕົວ ໃນປີ 2006 (ຕາຕະລາງ 32, 33, 34). ຜູ້ທີ່ດື່ມເຫຼົ້າຫຼາຍກ່ວາໝູ່ 50% ແມ່ນຄົນທີ່ມີ ອາຍຸ 19-25 ປີ (1) ແຕ່ໃນວັຍດັ່ງກ່າວ, ປີ 2006 ມີພຽງແຕ່ 3.5% (ຕາຕະລາງ 67, 68, 69) ແລະຫຼາຍກ່ວາໝູ່ ແມ່ນຈຳພວກຄົນທີ່ມີອາຍຸ ແຕ່ 51 ປີຂຶ້ນໄປ. ຖ້າສົມທຽບໃສ່ປີ 2005 ກ່ອນການເຂົ້າຮ່ວມນຳໂຄງການ, ການດື່ມເຫຼົ້າ ກໍລົດລົງ ດ້ວຍ 8.08%. ອີງຕາມຕົວເລກທາງດ້ານສຖິຕິ, ການສູບຢາ ກໍມີກະແສລົດລົງ ດ້ວຍຈັງຫວະດຽວກັນກັບການດື່ມເຫຼົ້າ (ຕາຕະລາງ 1, 9, 16, 38, 39, 40, 73, 74, 75, 103, 104). ການນຳໃຊ້ຢາເສບຕິດເພື່ອຄວາມມ່ວນຊື່ນໃນປະຊາຄົມລາວ ມີພຽງແຕ່ 4.6-5.3% ໂດຽສະເພາະແມ່ນຜູ້ຊາຍທີ່ມີອາຍຸແຕ່ 19-25 ປີ (1).

ບັນຫາທາງດ້ານສຸຂພາບຂອງຊຸມຊົນຊາວລາວທີ່ມີການກ່ຽວພັນກັບການສູບຢາ, ການດື່ມເຫຼົ້າ ແລະການນຳໃຊ້ຢາເສບຕິດຊນິດອື່ນ ໄດ້ມີສາຍພົວພັນ ແລະສົ່ງຜົນໃຫ້ກັນ ແລະກັນ ກັບການຝ່າຝືນຣະບຽບກົດໝາຍຂອງບ້ານເມືອງ (r=+.470**) .ໃນປີ 2005(1) ແລະໃນປີ 2006 (r=+.689**) (ຕາຕະລາງ 88, ເສັ້ນສແດງ 1). ການເວົ້າລົມ ຫຼືບອກກ່າວຕໍ່ສະມາຊິກພາຍໃນຄອບຄົວ ກ່ຽວກັບການນຳໃຊ້ ຊຶ່ງອາດສົ່ງຜົນອັນຕະຣາຍ ໃຫ້ແກ່ສຸຂພາບ ມີການຕິດພັນກັບ ການດື່ມເຫຼົ້າໃນປະຈຸບັນ (r=-.183*)(1) ແລະການເຂົ້າປະກອບສ່ວນນຳໂຄງການຕ້ານຢາເສບຕິດມີພິດ ທີ່ທາງອົງການລາວ ເພື່ອຄວາມກ້າວໜ້າໃນສະຫະຣັຖຈັດຂຶ້ນ (r=+.225**) (1).

ເກີນກວ່າເຄິ່ງໜຶ່ງຂອງປະຊາຄົມ ທີ່ຄົນລາວໄດ້ຮັບການຝຶກອົບຮົມ ນຳໂຄງການຕ້ານຢາເສບຕິດມີພິດ ທີ່ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖໄດ້ຈັດຂຶ້ນ, ຫຼາຍກ່ວາໝູ່ແມ່ນຜູ້ທີ່ມີອາຍຸ ແຕ່ 12-18 ປີ ຊຶ່ງກວມຮອດເຖິງ 56% (1). ອີງຕາມການວິຈັຍແບບ Correlation ການຝຶກອົບຮົມດັ່ງກ່າວ ໄດ້ກາຍເປັນປັດຈັຍພື້ນຖານ ທີ່ສາມາດແກ້ໃຂບັນຫາທີ່ອາດຈະເກີດຂຶ້ນແກ່ສຸຂພາບໄດ້ (r=+.225**), ຈຳກັດໄດ້ ບັນຫາການລ່ວງລະເມີດຕໍ່ກົດໝາຍບ້ານເມືອງ (r=+.238**), ຄວບຄຸມໄດ້ການປະພຶດຕົວຂອງສະມາຊິກຂອງປະຊາຄົມ (r=+.215*), ໄດ້ມີພື້ນຖານຄວາມຮັບຮູ້ ເພື່ອເປັນການບອກກ່າວຕໍ່ສະມາຊິກທາງດ້ານການຕ້ານຢາເສບຕິດ (r=+.341**), ລົດຜ່ອນການດື່ມເຫຼົ້າ (r=-.197*) ແລະສູບຢາ (r=-.302**) ຊຶ່ງດັສນີດັ່ງກ່າວສາມາດຢືນຢັນໄດ້ຮອດ 95% ເຖິງ 99% (1).

(1) ຜົນສຳເຣັດຂອງການສຳຣວດ ແລະການວິຈັຍທາງດ້ານສຖິຕິ ກ່ຽວກັບການດື່ມເຫຼົ້າ, ສູບຢາ ແລະນຳໃຊ້ຢາເສບຕິດຊນິດອື່ນພາຍໃນປະຊາຄົມລາວ (ການສຳຣວດກ່ອນການເຂົ້າຮ່ວມນຳໂຄງການ ປີ 2005)

Table 1

**Statistics**

| | | ATOD Health Problem | Breaking Laws | Worried Behavior | Using ATOD | Talking about ATOD | Drinking Alcohol Present | Drinking Alcohol Past | Smoking Tobacco Present | Drugs for Pleasure | Drugs for Pleasure Past | Participation ATOD Pgr | Your Gender | Age |
|---|---|---|---|---|---|---|---|---|---|---|---|---|---|---|
| N | Valid | 149 | 149 | 149 | 149 | 149 | 149 | 149 | 149 | 149 | 149 | 149 | 149 | 149 |
| | Missing | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 | 0 |
| Mean | | 1.9463 | 1.9396 | 1.3758 | 1.9195 | 1.8255 | 1.1208 | 1.6846 | 1.1074 | 1.0000 | 1.0134 | 1.8389 | 1.6309 | 2.3557 |
| Std. Error of Mean | | .01853 | .01958 | .03981 | .02237 | .03120 | .02679 | .03820 | .02545 | .00000 | .00946 | .03022 | .03967 | .10260 |
| Median | | 2.0000 | 2.0000 | 1.0000 | 2.0000 | 2.0000 | 1.0000 | 2.0000 | 1.0000 | 1.0000 | 1.0000 | 2.0000 | 2.0000 | 2.0000 |
| Mode | | 2.00 | 2.00 | 1.00 | 2.00 | 2.00 | 1.00 | 2.00 | 1.00 | 1.00 | 1.00 | 2.00 | 2.00 | 1.00 |
| Std. Deviation | | .22617 | .23903 | .48597 | .27304 | .38082 | .32700 | .46626 | .31064 | .00000 | .11546 | .36884 | .48420 | 1.25242 |
| Variance | | .05115 | .05714 | .23617 | .07455 | .14502 | .10693 | .21740 | .09650 | .00000 | .01333 | .13604 | .23445 | 1.56857 |
| Skewness | | -4.000 | -3.728 | .518 | -3.114 | -1.733 | 2.351 | -.802 | 2.562 | | 8.543 | -1.863 | -.548 | .176 |
| Std. Error of Skewness | | .199 | .199 | .199 | .199 | .199 | .199 | .199 | .199 | .199 | .199 | .199 | .199 | .199 |
| Kurtosis | | 14.194 | 12.061 | -1.755 | 7.804 | 1.016 | 3.574 | -1.375 | 4.627 | | 71.945 | 1.490 | -1.723 | -1.619 |
| Std. Error of Kurtosis | | .395 | .395 | .395 | .395 | .395 | .395 | .395 | .395 | .395 | .395 | .395 | .395 | .395 |
| Minimum | | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 | 1.00 |
| Maximum | | 2.00 | 2.00 | 2.00 | 2.00 | 2.00 | 2.00 | 2.00 | 2.00 | 1.00 | 2.00 | 2.00 | 2.00 | 4.00 |

Table 2

**ATOD Health Problem**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 8 | 5.4 | 5.4 | 5.4 |
| | Yes | 141 | 94.6 | 94.6 | 100.0 |
| | Total | 149 | 100.0 | 100.0 | |

Table 3

**Breaking Laws**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 9 | 6.0 | 6.0 | 6.0 |
| | Yes | 140 | 94.0 | 94.0 | 100.0 |
| | Total | 149 | 100.0 | 100.0 | |

Table 4

**Worried Behavior**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 93 | 62.4 | 62.4 | 62.4 |
| | Yes | 56 | 37.6 | 37.6 | 100.0 |
| | Total | 149 | 100.0 | 100.0 | |

Table 5

**Using ATOD**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 12 | 8.1 | 8.1 | 8.1 |
| | Yes | 137 | 91.9 | 91.9 | 100.0 |
| | Total | 149 | 100.0 | 100.0 | |

Table 6

**Talking about ATOD**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 26 | 17.4 | 17.4 | 17.4 |
| | Yes | 123 | 82.6 | 82.6 | 100.0 |
| | Total | 149 | 100.0 | 100.0 | |

Table 7

**Drinking Alcohol Present**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 131 | 87.9 | 87.9 | 87.9 |
| | Yes | 18 | 12.1 | 12.1 | 100.0 |
| | Total | 149 | 100.0 | 100.0 | |

Table 8

**Drinking Alcohol Past**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 47 | 31.5 | 31.5 | 31.5 |
| | Yes | 102 | 68.5 | 68.5 | 100.0 |
| | Total | 149 | 100.0 | 100.0 | |

Table 9

**Smoking Tobacco Present**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 133 | 89.3 | 89.3 | 89.3 |
| | Yes | 16 | 10.7 | 10.7 | 100.0 |
| | Total | 149 | 100.0 | 100.0 | |

Table 10

**Smoking Tobacco Past**

| | | Frequency | Percent | Valid Percent | Cumulative Percent |
|---|---|---|---|---|---|
| Valid | No | 64 | 43.0 | 43.0 | 43.0 |
| | Yes | 85 | 57.0 | 57.0 | 100.0 |
| | Total | 149 | 100.0 | 100.0 | |

## ATOD Correlation Analysis

Graph 1

